# ສະພາບເສດຖະກິດມະຫາພາກ ຂອງ ສປປ ລາວ ປະຈຳປີ 2019 ແລະ ທ່າອ່ຽງ

ສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບໂຄງສ້າງເສດຖະກິດ (ຄສມປ)
ທີ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ສຄສຊ)

ວັນທີ 11 ກຸມພາ 2020

# ໂຄງຮ່າງບົດສະເໜີ

1. ເຫດການພົ້ນເດັ່ນສາກົນ ແລະ ພາຍໃນ
2. ສະພາບການເຕີບໂຕເສດຖະກິດຂອງລາວ
3. ສະຖຽນລະພາບເສດຖະກິດມະຫາພາກ
4. ທ່າອ່ຽງເສດຖະກິດ
5. ບາງປະເດັນທີ່ຄວນເອົາໃຈໃສ່

# 1. ເຫດການພົ້ນເດັ່ນຢູ່ສາກົນ




© 2009 www.outline-world-map.com

# 1. ເຫດການພົ້ນເດັ່ນໃນສາກົນ




ແຫຼ່ງຂໍ້ມູນ: IMF




ແຫຼ່ງຂໍ້ມູນ: ທະນາຄານໂລກ

- ເສດຖະກິດຂອງຈີນເຕີບໂຕຊ້າທີ່ສຸດໃນຮອບ 27 ປີ ຍ້ອນບັນຫາຂໍ້ຂັດແຍ່ງດ້ານການຄ້າ ແລະ ຂະບວນປະທ້ວງຢູ່ຮົງກົງ ສົ່ງຜົນກະທົບທັງທາງກົງ ແລະ ທາງອ້ອມຕໍ່ການສົ່ງອອກຂອງລາວທີ່ຢູ່ໃນຕ່ອງໂສ້ການສົ່ງອອກໄປຈີນ ແລະ ສົ່ງຕໍ່ໄປຍັງອາເມລິກາ ແລະ ອາດເຮັດໃຫ້ການລົງທຶນໂດຍກົງຈາກຈີນຢູ່ລາວຫລຸດລົງ.
- ການແຂງຄ່າຂອງເງິນບາດ ກະທົບໂດຍກົງຕໍ່ການນໍາເຂົ້າຂອງລາວ ຍ້ອນເກືອບ 60% ຂອງສິນຄ້ານໍາເຂົ້າຂອງລາວແມ່ນມາຈາກໄທເຮັດໃຫ້ລາຄາສິນຄ້າ ແລະ ປັດໃຈການຜະລິດສູງຂຶ້ນ.
- ດ້ານລາຄານໍ້າມັນໃນຕະຫຼາດໂລກ ຍັງມີຄວາມຜັນຜວນສູງ ແລະ ຄາດວ່າຈະສືບຕໍ່ເພີ່ມຂຶ້ນ ຍ້ອນກຸ່ມ OPEC ໄດ້ມີແຜນປັບຫລຸດກໍາລັງການຜະລິດລົງຕື່ມ
- ສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທໍາມະຊາດ ຢູ່ຫຼາຍປະເທດ ກໍ່ມັນມີນັບຫຼາຍຂຶ້ນ ທັງເປັນປັດໃຈສ່ຽງທີ່ຈະຖ່ວງດຶງການຟື້ນຕົວຂອງເສດຖະກິດໂລກ
- ໃນຕົ້ນປີ 2020 ນີ້, ຍັງມີຄວາມສ່ຽງໃໝ່ຈາກການແຜ່ລະບາດຂອງໄວຣັສໂຄໂຣນາ. ຄາດຄະເນເບື້ອງຕົ້ນ ຜົນກະທົບເບື້ອງຕົ້ນຕໍ່ລາຍຮັບຈາກຂະແໜງທ່ອງທ່ຽວລາວ ໄລຍະສອງເດືອນທໍາອິດຂອງປີ 2020 ປະມານ 20-25 ລ້ານໂດລ້າສະຫະລັດ.

# ບາງສະພາບພົ້ນເດັ່ນພາຍໃນ

- ການຫັນເຂົ້າສູ່ລະບຽບກົດໝາຍ
- ໄພພິບັດທາງທຳມະຊາດ ແລະ ການຟື້ນຟູ
- ການຈຳກັດລາຍຈ່າຍທີ່ບໍ່ຈຳເປັນຂອງພາກລັດ






# 2. ພາບການເຕີບໂຕເສດຖະກິດຂອງລາວປີ 2019




*ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ. ຕົວເລກຄາດຄະເນປີ 2019 (P) ແມ່ນຈາກ ສຄມປ, ສຄສຊ.*

- **<u>ປັດໃຈດຶງ:</u>**
  - ຜົນກະທົບຈາກໄພທຳມະຊາດຕໍ່ຂະແໜງການກະສິກຳ.
  - ການຜະລິດໄຟ້າຈາກເຂື່ອນທີ່ມີ ບໍ່ເປັນໄປຕາມແຜນ.
  - ການຜະລິດຂອງອຸດສາຫະກຳບໍ່ແຮ່ (ທອງແດງ) ສືບຕໍ່ຫຼຸດລົງ
  - ຂະແໜງກໍ່ສ້າງ ສະລໍຕົວ ຕາມທ່າອ່ຽງການລົງທຶນ
  - ການຊົມໃຊ້ ແລະ ການລົງທຶນຕ່າງປະເທດ (FDI) ສະລໍຕົວ
  - ເຊັ່ນກັນ ການໃຊ້ຈ່າຍ ແລະ ການລົງທຶນຂອງພາກລັດ.
- **<u>ປັດໃຈຍູ້:</u>**
  - ຂະແໜງການທ່ອງທ່ຽວ ຂະຫຍາຍຕົວ 14% ຫຼື 4.79 ລ້ານເທື່ອຄົນ.
  - ການລົງທຶນເອກະຊົນພາຍໃນ (ປ່ອຍສິນເຊື່ອ) ຍັງມີບັນຍາກາດຟືດພື້ນຢູ່ (7.1% ຈາກ 5.8%) - ຂໍ້ມູນເດືອນ 10
  - ຂະແໜງການສົ່ງອອກສິນຄ້າໄປຕ່າງປະເທດ ກໍ່ມີທ່າອ່ຽງຂະຫຍາຍຕົວດີ ປະມານ 11,08% ເຊັ່ນ: ນ້ຳຕານ, ເຈັ້ຍ, ກະສິກຳ

# 3. ດ້ານສະຖຽນລະພາບເສດຖະກິດມະຫາພາກ (ອັດຕາເງິນເຟີ້)







ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ.

- ອັດຕາເງິນເຟີ້ ຍັງສືບຕໍ່ມີທ່າອ່ຽງເພີ່ມຂຶ້ນ ຍ້ອນລາຄາສິນຄ້າປະເພດສະບຽງອາຫານ ແລະ ອ່ອນຄ່າຂອງເງິນກີບນັບແຕ່ຕົ້ນປີຜ່ານມາ.
- ສ່ວນປັດໄຈດ້ານລາຄານໍ້າມັນ ແມ່ນບໍ່ມີຜົນກະທົບຫຼາຍໃນປີ 2019 ເພາະລາຄານໍ້າໃນຕະຫຼາດໂລກ ມີທ່າອ່ຽງຫຼຸດລົງຈາກປີຜ່ານມາ.
- ອາດກະທົບຕໍ່ຄ່າຄອງຊີບຂອງຜູ້ມີລາຍໄດ້ຕໍ່າ ແລະ ຕົ້ນທຶນຂອງທຸລະກິດອື່ນໆ ເຊັ່ນ: ໂຮງແຮມ, ຮ້ານອາຫານ.

# 3. ດ້ານສະຖຽນລະພາບເສດຖະກິດມະຫາພາກ (ອັດຕາແລກປ່ຽນ)







ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ

- ອັດຕາແລກປ່ຽນ 2 ສະກຸນຫຼັກ ຍັງສືບຕໍ່ມີທ່າອ່ຽງອ່ອນຄ່າ.
- ກີບຕໍ່ໂດລາປີ 2019 (ອັດຕາທະນາຄານ) ສະເລ່ຍແມ່ນ 8.797 ກີບຕໍ່ໂດລາ ເພີ່ມຂຶ້ນ 3,58%.
- ກີບທຽບບາດປີ 2019 (ອັດຕາທະນາຄານ) ສະເລ່ຍແມ່ນ 287 ກີບຕໍ່ບາດ ເພີ່ມຂຶ້ນ 7,58%.
- ມີຜົນບໍ່ຫຼາຍກໍ່ໜ້ອຍຕໍ່ລາຄາສິນຄ້າ (ອັດຕາເງິນເຟີ້) ທີ່ສ່ວນໃຫຍ່ເຮົານຳເຂົ້າຈາກປະເທດເພື່ອນບ້ານ ແລະ ມີຜົນຕໍ່ການຊຳລະໜີ້ຕ່າງປະເທດທີ່ເປັນສະກຸນເງິນຕາ

# 3. ດ້ານສະຖຽນລະພາບຂອງເສດຖະກິດມະຫາພາກ (BOP)







ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ

- ດຸນບັນຊີຊຳລະປົກກະຕິ ຄາດວ່າ ຈະມີທ່າອ່ຽງດີຂຶ້ນ ຍ້ອນການນຳເຂົ້າຂະຫຍາຍຕົວຊ້າ ແຕ່ການສົ່ງອອກ ເພີ່ມຂຶ້ນໄວກວ່າ.
- ດຸນບັນຊີທຶນ-ການເງິນ ຄາດວ່າ ອາດຈະບໍ່ສູງເທົ່າກັບປີຜ່ານມາ ຍ້ອນໄລຍະ 9 ເດືອນເກີນດຸນພຽງ 1,3 ຕື້ໂດລາ ຕ່ຳກວ່າໄລຍະດຽວກັນໃນປີຜ່ານມາ (1,7 ຕື້ໂດລາ).
- ດຸນຊຳລະຕ່າງປະເທດ (BOP) ສຳລັບ 9 ເດືອນຕົ້ນປີ ແມ່ນຂາດດຸນ -58,7 ລ້ານໂດລາ ຕ່ຳກວ່າໄລຍະດຽວກັນຂອງປີຜ່ານມາ (-67,77 ລ້ານໂດລາ).
- ເຖິງຢ່າງໃດກໍ່ຕາມ, ຄັງສຳຮອງໃນເດືອນ 10 ເພີ່ມຂຶ້ນມີປະມານ 849 ລ້ານໂດລາ ໝາຍວ່າ BOP ເກີນດຸນໃນເດືອນ 10
- ດຸນຊຳລະກັບຕ່າງປະເທດ (BOP) ຄາດວ່າ ໝົດປີຍັງຈະຂາດດຸນໃນລະດັບໃກ້ຄຽງ ຫຼື ຫຼຸດລົງກວ່າປີຜ່ານມາ (-146 ລ້ານໂດລາ).

# 3. ດ້ານສະຖຽນລະພາບຂອງເສດຖະກິດມະຫາພາກ (ງົບປະມານ)




ແຫຼ່ງຂໍ້ມູນ: ກະຊວງການເງິນ




ແຫຼ່ງຂໍ້ມູນ: IMF, ຕຸລາ 2019

- ການຂາດດຸນງົບປະມານ ຄາດວ່າ ຢູ່ທີ່ລະດັບດີຂຶ້ນ 2.8% ຕໍ່ GDP ຫຼື 4,566 ຕື້ກີບ ຫຼຸດລົງກວ່າປີຜ່ານມາ (4.66% ຕໍ່ GDP).
- ໝົດປີ 2019, ຄາດວ່າປະຕິບັດລາຍຈ່າຍໄດ້ 88.7% ຂອງແຜນການປີ (29,607 ຕື້ກີບ) ແລະ ເກັບລາຍຮັບ ໄດ້ແຕ່ 95.6% ຂອງແຜນການປີ ຫຼື 25,041 ຕື້ກີບ.
- ແຕ່ຍັງມີສິ່ງທ້າທາຍໃນການປະຕິບັດງົບປະມານ ເຊັ່ນ: ການແກ້ໄຂໜີ້ລັດຖະບານ ແລະ ຜົນກະທົບຈາກໄພທຳມະຊາດ ຕໍ່ການຈັດເກັບງົບປະມານໂດຍສະເພາະຈາກຂະແໜງໄຟ້າ ແລະ ນຳເຂົ້ານ້ຳມັນເຊື້ອໄຟ.

# 4. ທ່າອ່ຽງເສດຖະກິດປີ 2020




*ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ. ຕົວເລກຄາດຄະເນປີ 2019 (P) ແລະ 2020 (P) ແມ່ນຈາກ ສຄມປ, ສຄສຊ.*

- **ປັດໄຈຢູ້:**
  - ການຜະລິດໄຟ້າ
  - ປະລິມານເງິນ (M2) ທີ່ຄາດວ່າຈະຍັງສືບຕໍ່ຂະຫຍາຍຕົວ
  - ກະສິກຳ.
- ດຸນງົບປະມານ ຄາດວ່າ ຈະຂາດດຸນໜ້ອຍລົງ ເຊິ່ງສອດຄ່ອງກັບແຜນງົບປະມານວາງໄວ້ (3,76% ຕໍ່ GDP ).
- ດຸນການຄ້າກັບຕ່າງປະເທດ ອາດມີທ່າອ່ຽງດີຂຶ້ນ.




*ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ. ຕົວເລກຄາດຄະເນປີ 2020 (P) ແມ່ນຈາກ ສຄມປ, ສຄສຊ.*

- ອັດຕາເງິນເຟີ້ ອາດມີທ່າອ່ຽງເພີ່ມຂຶ້ນ
  - ຄວາມກົດດັນຈາກຄວາມຕ້ອງການ (M2 ມີທ່າອ່ຽງເພີ່ມຂຶ້ນ)
  - ລາຄານ້ຳມັນ ແລະ ລາຄາສິນຄ້າສະບຽງອາຫານ
- ຖ້າອັດຕາແລກປ່ຽນ ຍັງສືບຕໍ່ອ່ອນຄ່າ ຈະກົດດັນເງິນເຟີ້ຂຶ້ນຕື່ມ

## 5. ບາງປະເດັນທີ່ຄວນເອົາໃຈໃສ່

ເພື່ອຮັບປະກັນການຫັນປ່ຽນທີ່ໜັກແໜ້ນ, ຫລຸດຜ່ອນຄວາມສ່ຽງຈາກພາຍນອກ ແລະ ເພີ່ມໂອກາດໃນການພັດທະນາ ຕາມທິດເຕີບໂຕໄວ, ມີສະຖຽນລະພາບ ແລະ ຍືນຍົງ, ເຮົາຍັງຕ້ອງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດບາງປະເດັນທີ່ສຳຄັນ ດັ່ງນີ້:

# 1. ສືບຕໍ່ປະຕິບັດຄວາມພະຍາຍາມຂອງລັດຖະບານ ໃນການແກ້ໄຂບັນຫາເສດຖະກິດ ແລະ ຂໍ້ຫຍຸ້ງຍາກໃນການພັດທະນາ

| ບັນຫາ | ຄວາມພະຍາຍາມຂອງລັດຖະບານເພື່ອແກ້ໄຂ | ຜົນໄດ້ຮັບ |
|---|---|---|
| - ດ້ານເສດຖະກິດ, ການເງິນ, ເງິນຕາ,<br>- ດ້ານໂຄງສ້າງທີ່ມີການຂາດດຸນຊໍາເຮື້ອ,ຍິ່ງເຕີບໂຕ ຍິ່ງຂາດດຸນ:<br>- ຍັງຢູ່ໃນສະຖານະພາບເປັນປະເທດທີ່ມີຄວາມສ່ຽງສູງທາງດ້ານໜີ້ສິນ<br>- ການລະດົມເງິນກູ້ຈາກຕ່າງປະເທດໃນຕໍ່ໜ້າຈະຫຍຸ້ງຍາກ, ຕົ້ນທຶນອັດຕາດອກເບ້ຍຈະສູງຂຶ້ນ | - 8 ມາດຕະການກະຕຸ້ນເສດຖະກິດ,<br>- ປັບປຸງບັນດາລະບຽບການ ແລະ ກົນໄກການປະສານງານການດໍາເນີນທຸລະກິດ<br>- ການຢຸດຕິການສົ່ງອອກໄມ້ທ່ອນ ແລະ ອື່ນໆ | - ການຂາດດຸນງົບປະມານມີທ່າອ່ຽງຫລຸດລົງ<br>- ຈໍາກັດລາຍຈ່າຍທີ່ບໍ່ມີປະສິດທິພາບ<br>- ສະໜອງສິນເຊື່ອພາຍໃນຫຼາຍຂຶ້ນ<br>- ຫັນເຂົ້າສູ່ລະບຽບກົດໝາຍຕ່າງໆຫຼາຍຂຶ້ນ<br>- ຕ້ອງອາໃສໄລຍະເວລາຍາວສົມຄວນ ເພື່ອໃຫ້ເຫັນຜົນແບບພົ້ນເດັ່ນໃນໄລຍະກາງ ຫາໄລຍະຍາວ. |

- **ສືບຕໍ່ປະຕິບັດບັນດາມາດຕະການຕ່າງໆຂອງລັດຖະບານ ເຊັ່ນ:**

- ສືບຕໍ່ການປະຕິຮູບຂະແໜງການເງິນແນໃສ່ຍົກສູງປະສິດທິພາບການເກັບລາຍຮັບ, ປັບປຸງ-ຂະຫຍາຍຖານລາຍຮັບ
- ສືບຕໍ່ປະຕິຮູບລັດວິສາຫະກິດທີ່ເຄື່ອນໄຫວບໍ່ມີປະສິດທິຜົນ
- ເອົາໃຈໃສ່ປະຕິບັດມະຕິຂອງກອງປະຊຸມສະໄໝສາມັນຄັ້ງທີ 8 ຂອງສະພາແຫ່ງຊາດ ຊຸດທີ 8
- ກະກຽມຄວາມພ້ອມໃນການຫລຸດພົ້ນຈາກບັນຊີປະເທດດ້ອຍພັດທະນາ

## 2. ສຸມໃສ່ພິເສດບາງຂະແໜງການທີ່ມີທ່າແຮງ(ກະສິກຳ,ທ່ອງທ່ຽວ) ເພື່ອໃຫ້ໄດ້ປະໂຫຍດສູງສຸດຈາກການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນ

| ທ່າແຮງ | ບັນຫາ |
|---|---|
| - ດ້ານກະສິກຳ, ທ່ອງທ່ຽວ.<br>- ມີການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນຫຼາຍຂຶ້ນ,<br>- ໄດ້ຮັບສິດທິພິເສດທາງການຄ້າຈາກຫຼາຍປະເທດ (ຈີນ: ງົວ 500.000 ໂຕ, ເຂົ້າ 50.000 ໂຕນ, ມັນດ້າງ, ໝາກໂມ ແລະ ຍັງມີພືດອື່ນອີກຈຳນວນໜຶ່ງທີ່ຍັງຢູ່ໃນຂັ້ນຕອນການເຈລະຈາ). | - ການນຳໃຊ້ສິດທິພິເສດຍັງເຮັດບໍ່ໄດ້ຢ່າງເຕັມສ່ວນ ,<br>- ການຜະລິດຍັງຂາດປະສິດທິພາບ, ບໍ່ໄດ້ມາດຕະຖານຂອງປະເທດທີ່ນຳເຂົ້າ,<br>- ດ້ານການທ່ອງທ່ຽວ: ຍັງບໍ່ທັນຍາດໄດ້ໂອກາດ ຫຼື ຂຸດຄົ້ນທ່າແຮງຈາກຂະແໜງທ່ອງທ່ຽວໄດ້ຢ່າງເຕັມທີ່ |

➢ **ການພັດທະນາດ້ານກະສິກຳໃນຕໍ່ໜ້າຈະຕ້ອງໄດ້ເອົາໃຈໃສ່ :**

- ສຸມໃສ່ພິເສດໃນການສົ່ງເສີມການຜະລິດກະສິກຳ (ພືດ-ສັດ) ທີ່ມີຕະຫຼາດຮອງຮັບແລ້ວ ແລະ ມີທ່າແຮງໃນການຂະຫຍາຍຕະຫຼາດ.
- ຫັນການຜະລິດໄປສູ່ແບບທັນສະໄໝ, ເອົາໃຈໃສ່ດ້ານມາດຕະຖານສິນຄ້າ, ເນັ້ນຜົນຕອບແທນຫຼາຍກວ່າຄວາມຊຳນານ.

-ສືບຕໍ່ຊຸກຍູ້ ສົ່ງເສີມການຜະລິດສິນຄ້າກະສິກຳສະອາດ ແລະ ປຸງແຕ່ງກະສິກຳ.

➢ **ດ້ານທ່ອງທ່ຽວ ສຸມໃສ່:**

- ເພີ່ມທະວີການວາງແຜນ ແລະ ນຳໃຊ້ທ່າແຮງດ້ານການເຊື່ອມໂຍງ-ເຊື່ອມຈອດ (ທາງລົດໄຟ, ທາງດ່ວນ ແລະ ເສັ້ນທາງເຊື່ອມຕໍ່ຕ່າງໆ)
- ສົ່ງເສີມການທ່ອງທ່ຽວຕິດພັນກັບການຜະລິດສິນຄ້າໝວດສະບຽງອາຫານ ແລະ ບໍລິການປິ່ນອ້ອມອື່ນໆ
- ປັບປຸງ ແລະ ສ້າງນະໂຍບາຍສົ່ງເສີມທຸລະກິດທ່ອງທ່ຽວແບບບຸກທະລຸ (ເຊັ່ນ: ນະໂຍບາຍດ້ານພາສີ, ອາກອນ)

## 3. ພັດທະນາຊັບພະຍາກອນມະນຸດໃຫ້ມີທັກສະ, ຄວາມຮູ້, ຄວາມສາມາດສູງສາມາດເຂົ້າຮ່ວມຕ່ອງໂສ້ການຜະລິດທີ່ມີມູນຄ່າເພີ່ມສູງ, ທັງເປັນການເກັບກ່ຽວຜົນປະໂຫຍດຈາກການປັນຜົນທາງປະຊາກອນ (Demographic Dividend).

| ທ່າແຮງ | ບັນຫາ |
|---|---|
| - ມີປະຊາກອນໜຸ່ມກວມອັດຕາສ່ວນຫຼາຍກວ່າໝູ່ໃນອາຊີ(ອາຍຸ 25 ປີລົງມາກວມປະມານ 60% ຂອງປະຊາກອນທັງໝົດ)<br>- ແຕ່ນີ້ຮອດປີ 2050, ປະເທດເຮົາຍັງ ຈະຍັງມີສັດສ່ວນຂອງປະຊາກອນໜຸ່ມໃນອັດຕາທີ່ສູງ | - ລະດັບສີມື ແລະ ຄວາມຮູ້-ຄວາມສາມາດຂອງແຮງງານຂອງລາວ ຍັງຕໍ່າທຽບກັບຕ່າງປະເທດ<br>- ການຜະລິດມີມູນຄ່າເພີ່ມຕໍ່າ, ຄຸນນະພາບຕໍ່າ<br>- ແຮງງານດິບຫຼັ່ງໄຫຼອອກໄປຊອກວຽກຢູ່ຕ່າງປະເທດ<br>- ຄວາມຕ້ອງການແຮງງານທີ່ມີທັກສະ, ແຕ່ການສະໜອງພາຍໃນພັດບໍ່ພຽງພໍ |

➢ **ການພັດທະນາຊັບພະຍາກອນມະນຸດ ຕ້ອງໄດ້ເອົາໃຈໃສ່ :**

- ຄົ້ນຄວ້າກໍານົດຢ່າງຈະແຈ້ງຂະແໜງການພັດທະນາທີ່ເປັນຈຸດສຸມ

- ກໍານົດນະໂຍບາຍແຮງງານ ທີ່ເນັ້ນສ້າງທັກສະ ແລະ ຄວາມສາມາດແຮງງານ ໃຫ້ສາມາດມີວຽກເຮັດງານທໍາ ທີ່ມີລາຍຮັບສູງ

- ກະກຽມລະບົບສຸຂະພາບທີ່ດີສໍາລັບຜູ້ກະສຽນອາຍຸ, ລະບົບສະຫວັດດີການ, ລະບົບບໍານານທີ່ທົ່ວເຖິງ ໂດຍເປັນລະບົບທີ່ບັງຄັບໃຫ້ປະຊາກອນໄວກໍາລັງແຮງງານມີການອອມ ແລະ ການລົງທຶນ

## 4. ເພີ່ມຄວາມເອົາໃຈໃສ່ໃນການຮັບມືກັບການປ່ຽນແປງຂອງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ ທີ່ນັບມື້ເກີດຖີ່ຂຶ້ນ ແລະ ຮຸນແຮງຂຶ້ນ ກະທົບຕໍ່ການເຕີບໂຕຂອງເສດຖະກິດ.

| ບັນຫາ | ສິ່ງທີ່ຄວນເອົາໃຈໃສ່ |
|---|---|
| - ການປ່ຽນແປງດິນຟ້າອາກາດ:<br>- ຫຼາຍໄພພິບັດທາງທຳມະຊາດທີ່ຮຸນແຮງເກີດຢູ່ຫຼາຍປະເທດ<br>- ໄພແຫ້ງແລ້ງໃນເຂດອ່າງແມ່ນ້ຳຂອງ ຮຸນແຮງກວ່າທຸກປີ<br>- ນ້ຳຖ້ວມໜັກທີ່ສຸດໃນຮອບຫຼາຍທົດສະວັດ<br>- ແຜ່ນດິນໄຫວຂະໜາດ 6,4 ຣິກເຕີ | - ຄົ້ນຄວ້າວາງແຜນຮອງຮັບແຕ່ຫົວທີ ຕໍ່ກັບໄພພິພັດທີ່ອາດຈະເກີດ<br>- ເຂັ້ມງວດມາດຕະການດ້ານຄວາມປອດໄພຂອງການກໍ່ສ້າງ<br>- ເພີ່ມປະສິດທິພາບໃນການແຈ້ງເຕືອນໄພລ່ວງໜ້າ, ການອົບພະຍົບ ແລະ ການບັນເທົາທຸກໃຫ້ວ່ອງໄວ ແລະ ມີປະສິດທິພາບກວ່າເກົ່າ<br>- ສຸມໃສ່ສ້າງມາດຕະການປ້ອງກັນ-ຮັບມືກັບໄພແຫ້ງແລ້ງ ແລະ ນ້ຳຖ້ວມ |

# 5. ຕິດຕາມ, ເຝົ້າລະວັງແລະພ້ອມຮັບມືກັບການລະບາດຂອງພະຍາດຮ້າຍແຮງຕ່າງໆໂດຍສະເພາະໄວຣັສໂຄໂຣນາສາຍພັນໃໝ່.

| ບັນຫາ | ຜົນກະທົບ |
|---|---|
| - ການແຜ່ລະບາດຂອງພະຍາດປອດອັກເສບ ເຊື້ອຈຸລະໂລກສາຍພັນໃໝ່ (ໄວຣັສໂຄໂຣນາ) ໃນຫຼາຍປະເທດໃນໂລກ<br>- ຈໍານວນຜູ້ ຕິດເຊື້ອ ແລະເສຍຊີວິດສືບຕໍ່ເພີ່ມຂຶ້ນເປັນທະວີຄູນພາຍໃນໄລຍະເວລາອັນສັ້ນ | - ຊີວິດ ແລະ ສຸຂະພາບຂອງປະຊາຊົນຫຼາຍປະເທດ<br>- ເສດຖະກິດຂອງພາກພື້ນ ແລະສາກົນ ລວມທັງລາວ<br>- ການທ່ອງທ່ຽວ, ການຂົນສົ່ງ |

➢ ຂະແໜງການກ່ຽວຂ້ອງຂອງ ສປປ ລາວ ໄດ້ມີມາດຕະການສະເພາະໃນການຮັບມື ແລະ ເຝົ້າລະວັງ ຊຶ່ງຕ້ອງໄດ້ສືບຕໍ່ ແລະ ເພີ່ມທະວີຄວາມເອົາໃຈໃສ່ໃຫ້ຫຼາຍຂຶ້ນໃນປີ 2020